

*Anther and stigma of Curcuma stenochila, Zingiberaceae*

# ສວນພຶກສາຊາດຜາຕັດແກ້

ສະບັບທີ 8: ພຶດສະພາ 2015

**ສວນພຶກສາຊາດຜາຕັດແກ້, ຫຼວງພະບາງ, ສປປລາວ**

ໂຊກດີປີໃໝ່ ແມ່ນສະບາຍດີປີໃໝ່ໃນພາສາລາວ. ພວກເຮົາໄດ້ມີຄວາມສຸກໃນອາທິດໜຶ່ງ ທີ່ໝູນວຽນປະຈົບຄົບຮອບຂອງການອວຍພອນ ແລະ ຫົດນໍ້າເຊິ່ງກັນ ແລະ ກັນ ຢ່າງຄຶກຄື້ນມ່ວນຊື່ນ. ເຊິ່ງເປັນການສະເຫຼີມສະຫຼອງຂອງທ້າຍລະດູແລ້ງ ເພື່ອສະລ້າງປັດເປົ່າສິ່ງທີ່ບໍ່ດີບໍ່ງາມໃນປີເກົ່າອອກ ເພື່ອເລີ່ມຕົ້ນປີໃໝ່. ມັນແມ່ນເວລາຂອງຄວາມມ່ວນຊື່ນ ແລະ ຄວາມສະໜຸກສະໜານຂອງຄົນລາວ ແລະ ພະນັກງານຜາຕັດແກ້. ປະຈຸບັນນີ້ພວກເຮົາໄດ້ສືບຕໍ່ເຮັດວຽກງານເປັນປົກກະຕິເພື່ອກະກຽມການປູກພືດໃນສວນໃນຊ່ວງລະດູຝົນ ແລ້ວບັນດາພືດພັນກໍ່ຈະໄດ້ຮັບນໍ້າຝົນ ດ້ວຍຄວາມຊຸ່ມຊື່ນຈາກທ້ອງຟ້າໂດຍບໍ່ຈຳເປັນຕ້ອງໄດ້ຫົດນໍ້າ.

**ທ່ານ ເຮັນຣິກ ກາເດັນລາ (ຜູ້ອຳນວຍການໃຫຍ່)**

## ສາລະບານ

1-4 ກ່ຽວກັບຜາຕັດແກ້

5-15 ຂ່າວຄາວຈາກ ຜາຕັດແກ້

16-31 ການອະນຸລັກພືດຕະກຸນດອກເອື້ອງຢູ່ ສປປ ລາວ
*ໂດຍ ແກ້ວອຸດອນ ສຸວັນນະກູມມານ*

*ວາລະສານຜາຕັດແກ້ອອນໄລນ໌ 3 ສະບັບຕໍ່ປີ ທີ່ເວບໄຊທ໌ຂອງຜາຕັດແກ້. ຫາກທ່ານມີຫົວຂໍ້ສາລະຫນ້າຮູ້ກ່ຽວກັບພືກສາຊາດ ແລະ ສິ່ງແວດລ້ອມ, ທີ່ເປັນຂ່າວທົ່ວໄປສາມາດລົງໃນວາລະສານຜາຕັດແກ້ໄດ້. www.pha-tad-ke.com*



ຂີ້ໝິ້ນຕົ້ນ - *Mahonia napaulensis, Berberidaceae*



ບົວຫຼວງຂາວ - *Nelumbo nucifera Gaertu. Hindu lotus.*

## ຄວາມເປັນມາຂອງສວນພຶກສາຊາດຜາຕັດແກ້

ສວນພຶກສາຊາດຜາຕັດແກ້ ເປັນສວນພຶກສາຊາດແຫ່ງທຳອິດຂອງ ສປປລາວ, ຕັ້ງຢູ່ບ້ານຈ່ານໃຕ້, ເມືອງຈອມເພັດ, ແຂວງຫຼວງພຣະບາງ, ຕັ້ງຢູ່ກົງກັນຂ້າມກັບຕົວເມືອງຫຼວງພຣະບາງຫ່າງຈາກຕົວເມືອງປະມານ 15 ນາທີ ໂດຍທາງເຮືອ, ເຊິ່ງຕັ້ງຢູ່ທ່າມກາງລະຫວ່າງທົ່ງນາ ແລະ ແມ່ນ້ຳຂອງ. ສະຖານທີ່ແຫ່ງນີ້ຈະເປັນສູນຄົ້ນຄວ້າ ທາງດ້ານພຶດສາດ ແລະ ສູນລວບລວມພັນພຶກສາຊາດໃນລາວ ແລະ ພາກພື້ນອາຊີຕາເວັນອອກສ່ຽງໃຕ້, ເຊິ່ງໄດ້ລິເລີ່ມສຳຫຼວດ ແລະ ສະເໜີໂຄງການໃນປີ 2009 ຈະເປີດເປັນທາງການໃນກາງປີ 2017, ໄດ້ມີການຮ່ວມມືກັບສະຖາບັນການຄົ້ນຄວ້າຕ່າງໆໃນລາວ, ພາກພື້ນອາຊີຕາເວັນອອກສ່ຽງໃຕ້, ເອີຣົບ ແລະ ອາເມຣິກາ ເພື່ອສ້າງໂປຣແກຣມການຝຶກອົບຮົມ, ແລກປ່ຽນຂໍ້ມູນຂ່າວສານ ແລະ ວິຊາການຮ່ວມກັນ.

ນອກຈາກນັ້ນທາງຜາຕັດແກ້ຂອງພວກເຮົາຍັງໄດ້ໃຫ້ທຶນແກ່ນັກສຶກສາທີ່ຮຽນເກັ່ງຂອງວິທະຍາໄລກະສິກຳ ແລະ ປ່າໄມ້ພາກເໜືອ ນອກຈາກນັ້ນພວກເຮົາຍັງໄດ້ສ້າງປຶ້ມສຳລັບເດັກນ້ອຍ ໂດຍຮັບການສະໜັບສະໜູນຈາກກອງທຶນຈາກສະວິດເຊີແລນ ແລະ ມີການສ້າງກິດຈະກຳຕ່າງໆກ່ຽວກັບການຮັກສິ່ງແວດລ້ອມກັບນັກຮຽນປະຖົມໃນຫຼວງພະບາງ.

ຂໍ້ມູນເພີ່ມເຕີມ: **www.pha-tad-ke.com**

# ສະມາຄົມເພື່ອນຜາຕັດແກ້

ສະມາຄົມເພື່ອນຜາຕັດແກ້ ໄດ້ຖືກສ້າງຕັ້ງຂຶ້ນໃນເດືອນ ມັງກອນ ປີ 2010 ທີ່ປະເທດຝຣັ່ງ, ຕໍ່ມາ ໃນປີ 2011 ເດືອນ ກໍລະກົດ ທີ່ປະເທດເນີເທີແລນ, ໃນເດືອນ ກັນຍາ ທີ່ ປະເທດລາວ. ການສ້າງສະມາຄົມຊ່ວຍເຫຼືອ ໂດຍບໍ່ຫວັງ ຜົນກຳໄລຂອງຜາຕັດແກ້ ແມ່ນເພື່ອສົ່ງເສີມທາງດ້ານການ ຄົ້ນຄວ້າວິທະຍາສາດ, ວັດທະນະທຳ ລວມໄປເຖິງການ ອະນຸລັກພືດພັນຂອງປະເທດລາວ ໂດຍສະເພາະແມ່ນ ແຂວງຫຼວງພະບາງ. ນອກນັ້ນ ສະມະຄົມເພື່ອນຜາຕັດແກ້ ຍັງໃຫ້ການສະໜັບສະໜູນໃນການເຮັດກິດຈະກຳປູກຈິດ ສຳນຶກໃຫ້ແກ້ນັກຮຽນໃນການອະນຸລັກທຳມະຊາດ ແລະ ສິ່ງແວດລ້ອມ.

*ການຊ່ວຍເຫຼືອຂອງສະມາຄົມເພື່ອນຜາຕັດແກ້ ຍັງຈະໄດ້ຮັບ ການສະໜັບສະໜູນເພີ່ມຂຶ້ນຕໍ່ໆໄປ.*

**ຕິດຕໍ່: ເພັດສະພອນ ມະໂນລາ**
**contact@friends-pha-tad-ke.com**
**ຂໍ້ມູນເພີ່ມເຕີມ: www.friends-pha-tad-ke.com**



ເອື້ອງໜວດປາດຸກ - *Holcoglossum subulifolium, Orchidaceae*



ເດືອນທັນວາ 10 / 14, 2014
ກິດຕິສັກ ພຸດທະວົງ (ສວນພຶກສາຊາດຜາຕັດແກ້)
ຮ່ວມກັບ ດຣ. ປຣາໂມດ ໄຕຣບູນ ແລະ ສຈ. ດຣ. ປີຍະ
ສະເຫຼີມກລິ່ນ (ສະຖາບັນວິທະຍາສາດ ແລະ ເຕັກໂນ
ໂລຊີແຫ່ງປະເທດໄທ) ແລະ ຣສ. ດຣ. ວິຈິດ ລຳໄຊ
(ມະຫາວິທະຍາໄລແຫ່ງຊາດ) ໄດ້ລົງພາກສະໜາມ
ທີ່ປ່າສະຫງວນແຫ່ງຊາດ ນາກາຍ-ນ້ຳເທີນ (ແຂວງຄຳ
ມ່ວນ) ເພື່ອສຳຫຼວດພັນພືດທີ່ຫາຍາກ ແລະ ໃກ້ຈະສູນພັນ
ເພື່ອຫາວິທີໃນການອະນຸລັກ.













ເດືອນມັງກອນ 13/19, 2015
ກິດຕິສັກ ພຸດທະວົງ (ສວນພຶກສາຊາດຜາຕັດແກ້) ຮ່ວມກັບ ຮສ. ດຣ. ວິຈິດ ລໍາໄຊ (ມະຫາວິທະຍາໄລແຫ່ງຊາດ), ດຣ. ຟີລິບ ທອມມາສ (ສວນພຶກສາຊາດອີດິນເບີກ) ແລະ ດຣ. ເຈັທເຊັນ ຄອກແມນ (ມະຫາວິທະຍາໄລຊານຟານຊິສໂກ) ໄດ້ລົງພາກສະໜາມ ສໍາຫຼວດປະຊາກອນ, ລະບົບນິເວດວິທະຍາ ແລະ ການກະຈາຍພັນຂອງໄມ້ຮີ້ງທາມ *(Glyptostrobus pensilis)* ໃນເຂດປ່າສະຫງວນແຫ່ງຊາດ ນາກາຍ-ນໍ້າເທີນ (ແຂວງຄໍາມ່ວນ) ເປັນພືດທີ່ໃກ້ຈະສູນພັນ ເພື່ອຫາວິທີໃນການອະນຸລັກ.









ສວນພຶກສາຊາດຜາຕັດແກ້ຮ່ວມກັບຫໍສະໝຸດແຄຣ໌ໂຣ ໄດ້ຈັດຕັ້ງໂຄງການຖ່າຍພາບຂຶ້ນ ສອງລະດັບຄື: ນັກຖ່າຍພາບໜຸ່ມນ້ອຍ, ນັກຖ່າຍພາບອາວຸໂສ ເຊິ່ງເລີ່ມແຕ່ເດືອນກໍລະກົດ ຫາ ເດືອນທັນວາ ປີ 2014 ແລະ ໄດ້ນຳສະເໜີຜົນງານຂອງການຖ່າຍພາບຂຶ້ນ ທີ່ສະຖາບັນຝຣັ່ງ ເມື່ອວັນທີ 20 ກຸມພາ 2014 ໂດຍສະເພາະມີການມອບລາງວັນດີເດັ່ນໃຫ້ນັກຖ່າຍພາບ ແລະ ສືບຕໍ່ການວາງສະແດງຮູບພາບຢູ່ສະຖານທູດຝຣັ່ງເປັນເວລາໜຶ່ງເດືອນ ໂຄງການດັ່ງກ່າວແມ່ນໄດ້ຮັບທຶນສະໜັບສະໜູນຈາກລັດຖະບານປະເທດສະວິດເຊີແລນ ກອງທຶນຮ່ວມມືເພື່ອການພັດທະນາຂອງສະວິດເຊີແລນໃນກອບວຽກງານຂອງກອງທຶນສິ່ງເສີມວັດທະນະທຳລາວ.







ເດືອນກຸມພາ-ມີນາ 19 / 2-13 / 3, 2015

ນາງ ປິດສະໜາ ແລະ ນາງ ໄຊສິມຫວັງ ນັກສຶກສາຈາກພາກວິຊາທ່ອງທ່ຽວແບບອະນຸລັກທຳມະຊາດ, ຄະນະວິທະຍາສາດປ່າໄມ້, ມະຫາວິທະຍາໄລແຫ່ງຊາດ ໄດ້ລົງມາເກັບກຳຂໍ້ມູນ ແລະ ເຝິກງານທີ່ສວນພຶກຊາຊາດຜາຕັດແກ້ ເປັນເວລາສາມອາທິດ ພວກເຂົາເຈົ້າໄດ້ສຶກສາທ່າແຮງ ແລະ ແຜນພັດທະນາ ສວນພຶກສາຊາດຜາຕັດແກ້ ເພື່ອສ້າງເປັນແຫ່ງທ່ອງທ່ຽວແບບອະນຸລັກທາງທຳມະຊາດ, ໂດຍມີການສຳພາດ ແລະ ເກັບກຳຂໍ້ມູນຈາກອຳນວຍການ, ພະນັກງານຜາຕັດແກ້, ຊາວບ້ານ ແລະ ອຳນາດການປົກຄອງບ້ານຈ່ານໃຕ້ ເພື່ອປະກອບເຂົ້າໃນການຂຽນບົດຈົບຊັ້ນລະດັບປະລິນຍາຕີ. ນອກນັ້ນພວກເຂົາທັງສອງຍັງໄດ້ລົງເຮັດວຽກຮ່ວມກັບພະນັກພຶດສວນໃນການດູແລຮັກສາພືດພັນໄມ້ ແລະ ການຂະຫຍາຍພັນພືດອີກດ້ວຍ.







ເດືອນມີນາ 9, 2015
ກິດຕິສັກ, ແກ້ວອຸດອນ (ນັກພຶດສາດ) ແລະ ແສງທອງ (ນັກພຶດສວນ), ສວນພຶກສາຊາດຜາຕັດແກ້ ຮ່ວມກັບ ຮສ. ດຣ. ເອັນເດຣວ ແມັກໂດໂນ (ມະຫາວິທະຍາໄລ ເທັກຊັສ) ໄດ້ສຳຫຼວດບໍລິເວນພູເຂົາຫີນປູນໃນເຂດບ້ານ ນາເມືອງ, ເມືອງນານ, ແຂວງຫຼວງພຣະບາງ. ເພື່ອວາງ ແຜນສຳຫຼວດ ແລະ ອະນຸລັກພືດສະເພາະຖິ່ນທີ່ເກີດ ຈາກພູເຂົາຫີນປູນ ແລະ ໄດ້ພົບພືດສະເພາະຖິ່ນຫຼາຍ ຊະນິດເຊັ່ນ: ດອກເຜີ້ງປ່າ, ຕົ້ນຄໍ້ປ່າ, ຂີງປ່າ, ພືດຂະໜາດ ນ້ອຍເກີດຈາກຫີນຫຼາຍຊະນິດ.









ເດືອນມັງກອນ 23, 2015
ສວນພຶກສາຊາດຜາຕັດແກ້ ຮ່ວມກັບ ນາງ ບີບາ ວິໄລເລັກ ແລະ ທ່ານ ສົມສະນິດ ນິດຖາຄົງ ໄດ້ນຳສະເໜີກ່ຽວກັບການຫຼິ້ນແບບທຳມະຊາດຢູ່ສະຖານທູດຝຣັ່ງ ທີ່ນະຄອນຫຼວງວຽງຈັນ ແລະ ວັນທີ 27 ໃນເດືອນດຽວກັນນັ້ນ ເພິ່ນຍັງໄດ້ນຳສະເໜີຢູ່ທີ່ຫຼວງພຣະບາງ ພ້ອມນັ້ນຍັງສະແດງຮູບພາບເປັນເວລາໜຶ່ງເດືອນອີກດ້ວຍ.






ເດືອນມີນາ 28, 2015
ທ່ານ ຣິກ ກາເດັນລາ (ອຳນວຍການໃຫຍ່), ກິດຕິສັກ
ແລະ ແກ້ວອຸດອນ (ນັກພືດສາດ) ໄດ້ເຂົ້າຮ່ວມກອງປະຊຸມ
Association for tropical biology and concervation
Asia pacific ທີ່ເມືອງພະນົມເປັນ, ປະເທດກຳປູເຈຍ.
ນອກຈາກການເຂົ້າຮ່ວມກອງປະຊຸມແລ້ວ, ກິດຕິສັກ ແລະ
ແກ້ວອຸດອນ ຍັງໄດ້ເຂົ້ອຮ່ວມ Rufford proposal writing
workshop ອີກດ້ວຍ.















ເດືອນເມສາ 3 / 12, 2015

ອິນສະໄຫວ (ຜູ້ຈັດການຫ້ອງການ), ສິມດີ (ຫົວໜ້າພືດສວນ), ກິດຕິສັກ ແລະ ແກ້ວອຸດອນ (ນັກພືດສາດ) ໄດ້ມີໂອກາດໄປທັດສະນະສຶກສາຢູ່ທີ່ ສະຖາບັນວິໄຈວິທະຍາສາດ ແລະ ເຕັກໂນໂລຢີ ກ່ຽວກັບການສຶກສາຄົ້ນຄວ້າພັນພືດ, ການປູກພືດ ແລະ ສ້າງສວນ ຮ່ວມກັບ ດຣ. ປຣາໂມດ ໄຕຣບູນ ແລະ ສຈ. ດຣ. ປີຍະ ສະເຫຼີມກລິ່ນ ທີ່ບາງກອກ, ປະເທດໄທ. ຫຼັງຈາກນັ້ນໄດ້ໄປທັດສະນະສຶກສາຢູ່ສະຖານີກະສິກຳລຳຕະຄອງ, ສະຖານີວິໄຈສິ່ງແວດລ້ອມສະແກລາດ. ນອກນັ້ນພວກເຂົາຍັງໄດ້ລົງພາກສະໜາມທີ່ປ່າສະຫງວນເຂົາໃຫຍ່ ນະຄອນລາດຊະສີມມາ ແລະ ຍັງໄດ້ລົງສຳຫຼວດ ແລະ ເກັບຕົວຢ່າງຫຼາຍໆສະຖານທີ່ ທີ່ນ່າສົນໃຈ ຢູ່ການຈະນະບູລີອີກດ້ວຍ.



ເດືອນມີນາ 9, 2015

ໃນເດືອນມີນາ ທີ່ຜ່ານມາ ທາງສວນພຶກສາຊາດຜາຕັດແກ້ ໄດ້ຮັບເອົາສະມາຊິກໃໝ່ອີກໜຶ່ງຄົນ. ລາວຊື່ວ່າ: ທ. ບີຊົງ ອາຍຸ 30 ປີ, ລາວເປັນຄົນຊົນເຜົ່າມົ້ງ ເຊິ່ງມາຈາກພາກເໜືອຂອງຫຼວງພຣະບາງໄດ້ບັນຈຸເຂົ້າໃນພະແນກພຶດສວນ, ລາວມີຄວາມສົນໃຈດ້ານການສຶກສາຄົ້ນຄວ້າກ່ຽວກັບພືດເປັນຢາ ແລະ ມີຄວາມສຸກ ແລະ ພູມໃຈຫຼາຍທີ່ໄດ້ເປັນສ່ວນໜຶ່ງໃນການສ້າງສວນພຶກສາຊາດຜາຕັດແກ້.











ເດືອນເມສາ 14 - 15 - 16, 2015

ເນື່ອງໃນໂອກາດ ປີເກົ່າ 2557 ໄດ້ໂບກມືອຳລາຈາກໄປ ແລະ ປີໃໝ່ 2558 ໄດ້ກ້າວເຂົ້າມາບັນຈົບຄົບຮອບອີກເທື່ອໜຶ່ງ ທີມງານສວນພຶກສາຊາດຜາຕັດແກ້ ໄດ້ມີການຈັດງານສະເຫຼີມສະຫຼອງປີໃໝ່ຂຶ້ນ ຢູ່ທີ່ຜາຕັດແກ້ຕາມຮີດຄອງປະເພນີທີ່ປະຕິບັດກັນມາ, ດ້ວຍຄວາມມ່ວນຊື່ນລ່າເລີງ, ເຕັມໄປດ້ວຍຄວາມສຸກ ແລະ ຮອຍຍິ້ມໄປກັບການທົດນ້ຳເຊິ່ງກັນ ແລະ ກັນ ເພື່ອປັດເປົ່າສິ່ງບໍ່ດີທັງຫຼາຍໄປກັບປີເກົ່າ. ນອກຈາກນັ້ນ ທາງທີມງານຂອງພວກເຮົາຍັງໄດ້ຈັດພາເຂົ້າສາມັກຄີຂຶ້ນເພື່ອເປັນການສົ່ງທ້າຍປີເກົ່າ ແລະ ຕ້ອນຮັບປີໃໝ່. ທຸກຄົນມີຄວາມສຸກຫຼາຍ ແລະ ພ້ອມໃຈກັນປະຖະໜາຂໍໃຫ້ສິ່ງສັກສິດຈົ່ງດົນບັນດານຄວາມສຸກກາຍສຸກໃຈ ແລະ ສິ່ງດີໆທັງຫຼາຍຈົ່ງບັງເກີດຂຶ້ນໃນຊີວິດ ແລະ ສວນພຶກສາຊາດຜາຕັດແກ້ອີກດ້ວຍ.



*Paul Mitchell and Angela Mateo Martinez* *ມາຈາກ ຊິດນີ ເຊິ່ງທັງສອງເພິ່ນໄດ້ເຂົ້າມາເປັນອາສາສະໝັກຢູ່ ທີ່ສວນພຶກສາຊາດຜາຕັດແກ້ ເປັນເວລາໜຶ່ງເດືອນ, ພວກ ເຂົາມີຄວາມສຸກຫຼາຍໃນການແລກປ່ຽນຄວາມຮູ້ຮ່ວມກັບ ພະນັກຜາຕັດແກ້ ໃນການປູກຝັງ ແລະ ການອອກແບບ ສວນຮ່ວມກັນ ແລະ ໃນຄະນະດຽວກັນນັ້ນພວກເຂົາທັງ ສອງຢາກຈະສຶກສາ ແລະ ຖອດຖອນບົດຮຽນກ່ຽວກັບພືດ ຖ້ອງຖິ່ນນຳພະນັກງານຜາຕັດແກ້ອີກດ້ວຍ.*









# ການອະນຸລັກພືດຕະກຸນດອກເອື້ອງຢູ່ ສປປ ລາວ

ພືດຕະກຸນດອກເອື້ອງ ເປັນຕະກຸນທີ່ໃຫຍ່ເປັນອັນດັບສອງໃນພືດຕະກຸນດອກ, ມີຈຳນວນ 880 ສະກຸນ, 26,049 ຊະນິດ, ເຊິ່ງກະແຈກກະຈາຍຢູ່ທົ່ວໂລກ. ເອື້ອງແມ່ນມີຄວາມສຳຄັນຫຼາຍດ້ານເຊັ່ນ: ນຳໃຊ້ເຂົ້າໃນພືດເປັນຢາ, ພືດປະດັບ, ການຄ້າ ແລະ ອື່ນໆອີກດ້ວຍ. ນອກຈາກນັ້ນ, ແຕ່ສັດຕະວັດທີ່ 19 ເປັນຕົ້ນມາ ດອກເອື້ອງໃນເຂດຮ້ອນໄດ້ນຳມາປູກຢ່າງກວ້າງຂວາງ, ນັກພືດສວນໄດ້ມີການຜະລິດສາຍພັນປະສົມ ແລະ ເພາະລ້ຽງ ເປັນຈຳນວນຫຼາຍກວ່າ 100,000 ສາຍພັນ. ພືດຕະກຸນນີ້ສາມາດ ພົບໃນປ່າຫຼາກຫຼາຍປະເພດເຊັ່ນ: ເຂດພູຫີນປູນ, ປ່າແປກ, ປ່າດົງດິບ, ປ່າດິບແລ້ງ, ປ່າປະສົມຜັດໃບ ແລະ ເຂດປ່າໂຄກ. ປະເທດລາວເປັນປະເທດທີ່ຍັງມີຄວາມອຸດົມ ສົມບູນຂອງຊະນິດພັນດອກເອື້ອງຫຼາຍຢູ່, ແຕ່ໜ້າເສຍດາຍທີ່ມີການເກັບ ແລະ ຂາຍ ໃຫ້ນັກທຸລະກິດ ທັງຄົນຈີນ ແລະ ຄົນໄທເປັນຈຳນວນຫຼວງຫຼາຍ ແລະ ອີກ ສາເຫດໜຶ່ງແມ່ນມາຈາກການຈູດປ່າຂອງປະຊາຊົນທ້ອງຖິ່ນໃນເຊີງກະສິກຳ. ດ້ວຍສາ ເຫດເຫຼົ່ານີ້, ພວກເຮົາມີຄວາມຈຳເປັນ ທີ່ຈະຕ້ອງອະນຸລັກແບບນອກຖິ່ນໄວ້ທີ່ສວນພຶກສາຊາດ ຜາຕັດແກ້ ສປປ ລາວ. ມີ 531 ຊະນິດຂອງດອກເອື້ອງພັນພື້ນເມືອງ ລວມມີ 116 ສະກຸນ, ເຊິ່ງໄດ້ມີການຈົດບັນທຶກ ໃນການລົງສຳຫຼວດຕົວຈິງທີ່ຜ່ານມາ. (Newman et al., 2007, A.Schuiteman et la, 2008, L.V.Averyanov, 2013, O. Grub et al. 2014). ໃນປະເທດລາວ ຄາດປະມານວ່າມີພືດຕະກຸນດອກເອື້ອງຈຳນວນ 831 ຊະນິດ.

**ໂດຍ: ແກ້ວອຸດອນ ສຸວັນນະກຸມມານ**



**ເອື້ອງເກົ້າເລກ້ານຍາວ -** *Cymbidium lowianum var. concolor, Orchidaceae*



ເອື້ອງສິງໂຕ - *Bulbophyllum morphologorum, Orchidaceae*



ເອື້ອງປີກແມງກະເບື້ອ - *Cheirostylis chinensis, Orchidaceae*



ເອື້ອງໃບຫາຍ - *Chilochista usneoides, Orchidaceae*



**ເອື້ອງແປນ -** *Chilochista arietinum,Orchidaceae*



ເອື້ອງຫົວໂປ - *Calanthe succedanea, Orchidaceae*



ເອື້ອງເກົ້າປ່ອງເກົ້າກິ້ວ - *Dendrobium linawianum, Orchidaceae*



ເອື້ອງນາງເອັນ - *Dendrobium ellipsophyllum, Orchidacae*



**ເອື້ອງເຂົ້າຕ່ອກ** - *Dendrobium oligophyllum, Orchidaceae*



ເອື້ອງແປງສີແຂ້ວ - *Dendrobium secundum, Orchidaceae*



**ເອື້ອງຫົວເຂົ້າຕົ້ມ** - *Eulophia andamanensis, Orchidaceae*



ເອື້ອງຕີນເຕົ່າ - *Gastrochilus calceolaris, Orchidaceae*



**ເອື້ອງຕີນເຕົ່າ** - *Gastrochilus obliquus, Orchidaceae*



**ນາງອື້ອປາກເປັດ -** *Habenaria lindleyana, Orchidaceae*



ນາງອື້ວປາກສະຫຼາມ - *Habenaria rhodocheila, Orchidaceae*



ເອື້ອງໝວດປາດຸກ - *Holcoglossum subulifolium, Orchidaceae*